ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ເລກທີ:..837..../ກຕສ

ນະຄອນຫຼວງວຽງຈັນ, ວັນທີ: 28 ກຸມພາ 2023

# ຂໍ້ຕົກລົງ

## ວ່າດ້ວຍ ການແບ່ງຄວາມຮັບຜິດຊອບປະຕິບັດບັນດາແຜນວຽກບຸລິມະສິດ 03 ແຜນດຳເນີນງານແຫ່ງຊາດ ຂອງ ວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຂອງບັນດາກົມ/ທຽບເທົ່າ, ບໍລິສັດ ດ້ານໂທລະຄົມ, ໄປສະນີ ອ້ອມຂ້າງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄລຍະປີ 2021-2025

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ສະບັບເລກທີ 58/ຄຊກມດ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂັ້ນຂະແໜງການ ແລະ ທ້ອງຖິ່ນ.
- ອີງຕາມ ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານແຫ່ງຊາດ ເພື່ອແມ່ ແລະ ເດັກ 05 ປີ ຄັ້ງທີ III (2021-2025), ສະບັບເລກທີ 578/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 05 ປີ ຄັ້ງທີ II (2021-2025), ສະບັບເລກທີ 577/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານແຫ່ງຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ 05 ປີ ຄັ້ງທີ IV (2021-2025), ສະບັບເລກທີ 579/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 05 ປີ ຄັ້ງທີ III ( 2021-2025)
- ອີງຕາມ ການເຫັນດີເປັນເອກະພາບຂອງກອງປະຊຸມ ຄກມດ ກະຊວງ ຕສ, ຄັ້ງວັນທີ 08 ກຸມພາ 2023.

ຮອງລັດຖະມົນຕີ, ປະທານ ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຕົກລົງ:

**ມາດຕາ 01:** ເຫັນດີແບ່ງຄວາມທີ່ຮັບຜິດຊອບປະຕິບັດບັນດາແຜນວຽກບຸລິມະສິດ 03 ແຜນດຳເນີນງານແຫ່ງຊາດ ຂອງວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນໄລຍະປີ 2021-2025 ຂອງ ຄກມດ ບັນດາກົມ/ທຽບເທົ່າ, ບໍລິສັດ ດ້ານໂທລະຄົມ, ໄປສະນີ ອ້ອມຂ້າງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ດັ່ງລາຍລະອຽດລຸ່ມນີ້:



สแกนด้วย CamScanner

| ລ/ດ | ເນື້ອໃນ | ກິດຈະກຳ | ພາກສ່ວນຮັບຜິດຊອບ |
| --- | --- | --- | --- |
| **I. ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີຄັ້ງທີ IV (2021-2025)** | | | |
| 1 | ແຜນງານ 1: ການໂຄສະນາເຜີຍແຜ່, ປຸກຈິດສຳນຶກ ແລະ ການຜັດທະນະລະບົບຖານຂໍ້ມູນຂ່າວສານ. | - ໂຄສະນາເຜີຍແຜ່ບັນດານະໂຍບາຍ, ນິຕິກຳພາຍໃນ ແລະ ສາກົນ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈເຖິງຄວາມ ສະເໝີພາບຍິງ-ຊາຍ ໃຫ້ໄດ້ 70% ຂອງພະນັກງານ-ລັດຖະກອນ ໃນຂະແໜງ ຕສ. | ຄກມດ ກະຊວງ: ຫ້ອງການ, ກົມ, ສູນ, ອົງການ, ສະຖາບັນ, ບັນດາບໍລິສັດ, ດ້ານໂທລະຄົມ, ໄປສະນີ |
| | | - ປັບປຸງ ແລະ ສ້າງແບບຟອມເກັບກຳຂໍ້ມູນສະຖິຕິແຍກເພດ ເພື່ອນຳໃຊ້ວັດແທກຄວາມຄືບໜ້າດ້ານຄວາມສະເໝີພາບຍິງ-ຊາຍ ໃນແຕ່ລະໄລຍະ. | ຫ້ອງການ |
| | | - ປັບປຸງ ແລະ ສ້າງແບບຟອມ ເກັບກຳຂໍ້ມູນຄວາມສະເໝີພາບຍິງ-ຊາຍ ໂດຍການໝູນໃຊ້ຂໍ້ມູນຂ່າວສານຈາກການຂຶ້ນທະບຽນເລກໝາຍໂທລະສັບ; | ອົງການຄຸ້ມຄອງໂທລະຄົມມະນາຄົມ |
| | | - ຜະລິດເຄື່ອງມືໂຄສະນາຕ່າງໆກ່ຽວກັບບົດບາດຍິງ-ຊາຍ (ແຜ່ນພັບ, ສະຕິກເກີ້, ວີດີໂອ, ສະປອດໂຄສະນາ, ບົດຄວາມ ແລະ ອື່ນໆ) | ຄກມດ ກະຊວງ, ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ |
| | | - ສ້າງເວັບໄຊ ຄກມດ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອເປັນແຫຼ່ງເຜີຍແຜ່ຂໍ້ມູນຕ່າງໆ ທີ່ຕິດພັນກັບວຽກງານ ຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ. | ຄກມດ ກະຊວງ, ສູນບໍລິຫານລັດ ດິຈິຕອນ |
| | | - ສ້າງລະບົບແອັບພລິເຄຊັນທາງມືຖື ກ່ຽວກັບພະຍາດຍິງ ແລະ ຂໍ້ມູນສຸຂະພາບຈະເລີນພັນ. | ກົມເຕັກໂນໂລຊີດິຈິຕອນ, ສູນລິຫານລັດດິຈິຕອນ |
| 2 | ແຜນງານ 2: ການສົ່ງເສີມ ແລະ ສ້າງຄວາມສະເໝີພາບຍິງ-ຊາຍ. | - ຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນຂະແໜງ ຕສ ດ້ານທັກສະໄອທີ ແລະ ພາວະຜູ້ນຳ ຢ່າງໜ້ອຍໃຫ້ໄດ້ 05 ຄັ້ງ. | ຄກມດ ກະຊວງ, ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ, ສູນລິຫານລັດດິຈິຕອນ |
| | | - ສ້າງຫຼັກສູດວິຊາຊີບທາງດ້ານເຕັກໂນໂລຊີດິຈິຕອນ ແລະ ລະບົບອອນລາຍ ເພື່ອສ້າງລາຍຮັບເຂົ້າຄອບຄົວ | ຄກມດ ກະຊວງ, ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ |
| | | - ສ້າງເງື່ອນໄຂໃຫ້ພະນັກງານ-ລັດຖະກອນເພດຍິງ ໃນຂອບເຂດທົ່ວປະເທດ ໄດ້ເຂົ້າຮ່ວມສຳມະນາ ແລະ ຝຶກອົບຮົມການນຳໃຊ້ບັນດາລະບົບບໍລິຫານລັດດິຈິຕອນ ເຂົ້າໃນຂົງເຂດວຽກງານທີ່ຕົນຮັບຜິດຊອບໃຫ້ໄດ້ຢ່າງໜ້ອຍ 300 ເທື່ອຄົນ. | ສູນລິຫານລັດດິຈິຕອນ ແລະ ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ |



สแกนด้วย CamScanner

| | | | |
|---|---|---|---|
| | | - ສ້າງແຜນຈັດສຳມະນາ ເຜີຍແຜ່ວຽກງານການຫັນເປັນດີຈິຕອນແຫ່ງຊາດ ໃຫ້ແກ່ຄະນະ ຄກມດ ຂອງບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າ ໃນຂັ້ນສູນກາງ ໃຫ້ໄດ້ຢ່າງໜ້ອຍ 05 ຄັ້ງ, ມີຜູ້ເຂົ້າຮ່ວມ ຢ່າງໜ້ອຍ 400 ເທື່ອຄົນ. | ກົມເຕັກໂນໂລຊີ ດີຈິຕອນ ແລະ ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ |
| | | - ເຊື່ອມສານບົດບາດຍິງ-ຊາຍເຂົ້າ ໂຄງການພັດທະນາ ແລະ ປັບປຸງໂປຣແກຣມອ່ານອອກສຽງພາສາລາວສຳລັບຄົນພິການຕາລາວ ເພື່ອເປັນເຄື່ອງມືໃນການນຳໃຊ້ເຄື່ອງອຸປະກອນຄອມພິວເຕີ ແລະ ເຂົ້າຫາຂໍ້ມູນຂ່າວສານທາງລະບົບອິນເຕີເນັດໃຫ້ແກ່ຄົນພິການຕາລາວ. | ສູນລິຫານລັດ ດີຈິຕອນສະຖາບັນຄົ້ນຄວ້ານຳໃຊ້ເຕັກໂນໂລຊີອັດສະລິຍະ |
| | | - ສ້າງບຸກຄະລາກອນ ICT ເພດຍິງອອກຮັບໃຊ້ສັງຄົມໃນສະຖາບັນເຕັກໂນໂລຊີ ແລະ ການສື່ສານ ແລະ ເຊື່ອມສານວຽກງານຄວາມສະເໝີພາບຍິງ-ຊາຍເຂົ້າໃນລະບົບການຮຽນການສອນຢູ່ໃນສະຖາບັນ | ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູຂ່າວສານ |
| 3 | ແຜນງານ 3: ສ້າງເພດຍິງໃນຕຳແໜ່ງນຳພາຄຸ້ມຄອງໃຫ້ເພີ່ມຂຶ້ນໃນແຕ່ລະຂັ້ນ | - ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງນຳພາຄຸ້ມຄອງຂັ້ນຕ່າງໆກວມ 30% ຂຶ້ນໄປ. | ກົມຈັດຕັ້ງ ແລະ ພະນັກງານ |
| | | - ສູ້ຊົນໃຫ້ພະນັກງານເພດຍິງໄດ້ຍົກລະດັບທິດສະດີການເມືອງ-ການປົກຄອງລະດັບຕ່າງໆ ກວມເອົາ 15-20% ຂອງຜູ້ໄດ້ຮັບຍົກລະດັບທັງໝົດ. | |
| | | - ອັດຕາສ່ວນຂອງພະນັກງານ-ລັດຖະກອນໄດ້ຮັບການຍົກລະດັບວິຊາສະເພາະຂັ້ນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດໃນນັ້ນແມ່ຍິງ 40% ຂຶ້ນໄປ. | |
| | | - ເພີ່ມທະວີຈຳນວນແມ່ຍິງໃຫ້ໄດ້ເຂົ້າຮ່ວມໃນທຸກໆກິດຈະກຳ, ການຝຶກອົບຮົມ, ການເຂົ້າຮ່ວມແລກປ່ຽນບົດຮຽນ-ປະສົບການກ່ຽວກັບເຕັກນິກວິຊາການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດກວມເອົາ 35% ຂຶ້ນໄປ. | ກົມຈັດຕັ້ງ ແລະ ພະນັກ ງານ ແລະ ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ |
| **II . ແຜນດຳເນີນງານແຫ່ງຊາດ ເພື່ອແມ່ ແລະ ເດັກ 05 ປີ ຄັ້ງທີ III (2021-2025)** | | | |
| 1 | ແຜນງານ1: ເອົາໃຈໃສ່ປົກປ້ອງເດັກໃຫ້ປອດໄພຈາກການໃຊ້ສື່ສັງຄົມອອນລາຍ ແລະ ການເຂົ້າເຖິງຂໍ້ມູນທີ່ບໍ່ປອດໄພ. | - ສຶກສາອົບຮົມໃຫ້ພະນັກງານຢ່າງເປັນປະຈຳ ໂດຍສະເພາະສິດ ແລະ ຂໍ້ຫ້າມຕ່າງໆໃນການນຳໃຊ້ສື່ສັງຄົມອອນລາຍ, ຫຼີກເວັ້ນການເຂົ້າຮ່ວມຂະບວນການທີ່ເປັນກົນອຸບາຍຫັນປ່ຽນຂອງພວກກຸ່ມຄົນບໍ່ຫວັງດີທີ່ປະກົດຕາມສື່ສັງຄົມອອນລາຍ | ຄກມດ ກະຊວງ: ຫ້ອງການ, ກົມ, ສູນ, ອົງການ, ສະຖາບັນ, ບັນດາບໍລິສັດ, ດ້ານໂທລະຄົມ, ໄປສະນີ |
| | | - ເຜີຍແຜ່ ແລະ ຄວາມຮູ້ ກ່ຽວກັບຄວາມປອດໄພທາງໄຊເບີ ແລະ ສື່ສັງຄົມອອນລາຍໃຫ້ປອດໄພໃຫ້ແກ່ໄວໜຸ່ມ. | ຄກມດ ກະຊວງ, ກົມຄວາມປອດໄພໄຊເບີ |
| | | - ໃຫ້ຄຳປຶກສາ ແລະ ແກ້ໄຂບັນຫາໃນການຊ່ວຍເຫຼືອ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ຈາກໄພທາງສື່ສັງຄົມອອນລາຍ | ກົມຄວາມປອດໄພໄຊເບີ |



สแกนด้วย CamScanner

| | | | |
|---|---|---|---|
| 2 | | - ຈັດກອງປະຊຸມສຳມະນາ ປຸກຈິດສຳນຶກກ່ຽວກັບວຽກງານ ສິດທິເດັກ ແລະ ການປົກປ້ອງເດັກທາງສື່ສັງຄົມອອນລາຍ. | ຄກມດ ກະຊວງ, ກົມຄວາມປອດໄພໄຊເບີ |
| 2 | ແຜນງານ 2: ສ້າງເຄື່ອງມື ແລະ ຝຶກອົບຮົມກ່ຽວກັບການນຳໃຊ້ສື່ສັງຄົມອອນລາຍຢ່າງປອດໄພສຳລັບເດັກ | - ສ້າງສື່ສິ່ງພິມຕ່າງໆ: ໂປສເຕີ, ແຜ່ນພັບ, ວີດີໂອໃນການໂຄສະນາຂ່າວສານເພື່ອແນະນຳການນຳໃຊ້ສື່ອອນລາຍທີ່ມີຄວາມປອດໄພ. | ກົມຄວາມປອດໄພໄຊເບີ ແລະ ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ |
| | | - ຄົ້ນຄວ້າບົດຄວາມກ່ຽວກັບ ຄວາມປອດໄພທາງລະບົບຄອມພິວເຕີ; | ກົມຄວາມປອດໄພໄຊເບີ |
| | | - ປັບປຸງເນື້ອໃນຂອງປຶ້ມແບບຮຽນດ້ານຄວາມປອດໄພໄຊເບີ ເພື່ອສະໜັບສະໜູນປຶ້ມແບບຮຽນເຂົ້າຫຼັກສູດຂອງສະຖາບັນເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, ຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ຮ່ວມກັບກະຊວງສຶກສາທິການ ແລະ ກິລາ. | |
| | | - ສ້າງເຄື່ອງມື ແລະ ຝຶກອົບຮົມກ່ຽວກັບການນຳໃຊ້ປຶ້ມແບບຮຽນ-ແບບສອນ ແຕ່ຊັ້ນເດັກອະນຸບານ-ຊັ້ນມັດທະຍົມຕອນປາຍ ແບບເອເລັກໂຕຼນິກ ໂດຍຜ່ານລະບົບອອນລາຍ ແລະ ອອບລາຍ. | ສະຖາບັນ ຄົ້ນຄວ້ານຳໃຊ້ ເຕັກໂນໂລຊີອັດສະລິຍະ |
| | | - ສ້າງຖານຂໍ້ມູນດີຈີຕອນ ເພື່ອພັດທະນາເສດຖະກິດ ແລະ ສັງຄົມ ເພື່ອໂຄສະນາເຜີຍແຜ່, ປຸກຈິດສຳນຶກ ແລະ ຖ່າຍທອດຄວາມຮູ້ ຜ່ານລະບົບອອນລາຍໃຫ້ແກ່ສັງຄົມ | ສະຖາບັນ ຄົ້ນຄວ້ານຳໃຊ້ ເຕັກໂນໂລຊີອັດສະລິຍະ |
| **III. ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ເດັກ 05 ປີ ຄັ້ງທີ II (2021-2025)** | | | |
| 1 | ແຜນງານ 1: ການປ້ອງກັນ ແລະ ແກ້ໄຂ ກ່ຽວກັບຄວາມຮຸນແຮງທາງສື່ສັງຄົມອອນລາຍ ລວມທັງການຂູດຮີດທາງເພດ ແລະ ການສ່ອງລະເມີດເດັກທາງສື່ສັງຄົມອອນລາຍ | - ສ້າງແຜນດຳເນີນງານແຫ່ງຊາດກ່ຽວກັບ ການປົກປ້ອງເດັກທາງສື່ສັງຄົມອອນລາຍ ຮ່ວມກັບຂະແໜງກ່ຽວຂ້ອງ. | ຄກມດ ກະຊວງ, ຫ້ອງການ, ກົມຄວາມປອດໄພໄຊເບີ ແລະ ຂະແໜງການທີ່ກ່ຽວຂ້ອງ |
| | | - ທົບທວນ ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ ແລະ ດຳລັດ ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານທາງອິນເຕີເນັດ | ກົມຄວາມປອດໄພທາງໄຊເບີ, ກົມເຕັກໂນໂລຊີດີຈີຕອນ |
| | | - ຈັດກອງປະຊຸມປຶກສາຫາລືກັບພາກເອກະຊົນ ກ່ຽວກັບການປ້ອງກັນຄວາມຮຸນແຮງຕໍ່ເດັກ ທາງສື່ອອນລາຍ ຜ່ານເຄືອຂ່າຍໂທລະຄົມ-ອິນເຕີເນັດ ( ສຽງເພງລໍສາຍ, SMS...) ລວມທັງກຳນົດຄວາມຮັບຜິດຊອບຂອງພາກເອກະຊົນ; | ອົງການຄຸ້ມຄອງ, ກົມຄວາມປອດໄພໄຊເບີ ແລະ ບັນດາບໍລິສັດດ້ານໂທລະຄົມ ແລະ ໄປສະນີ |
| | | - ດຳເນີນການສຶກສາຄົ້ນຄວ້າລະດັບຊາດ ກ່ຽວກັບ ການນຳໃຊ້ອິນເຕີເນັດ ແລະ ສື່ອອນລາຍຂອງເດັກ ໃນ ສປປ ລາວ | ກົມຄວາມປອດໄພໄຊເບີ, ສູນອິນເຕີເນັດແຫ່ງຊາດ |
| | | - ສະໜັບສະໜູນຂໍ້ລິເລີ່ມຕ່າງໆເຊັ່ນ: ກຳມະການຕິດຕາມລະດັບໂລກ (Virtual Global Taskforce) ແລະ ການປົກ | ກົມຄວາມປອດໄພໄຊເບີ |



สแกนด้วย CamScanner

| | | | |
|---|---|---|---|
| | | ປ້ອງເດັກໂລກ (WeProtect Global) ເພື່ອຮ່ວມມືຢ່າງມີປະສິດທິຜົນໃນການສືບສວນ ແລະ ການດຳເນີນຄະດີຂອງເຄືອຂ່າຍອາຊະຍາກຳ ແລະ ຜູ້ກະທຳຜິດ; | |
| | | - ເພີ່ມທະວີການຮ່ວມມືກັບອົງການບັງຄັບໃຊ້ກົດໝາຍຂອງສາກົນ, ແລກປ່ຽນ ແລະ ປັບປຸງຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບເດັກຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດ ແລະ ຮັບເອົາຂໍ້ມູນຫຼັກຖານດິຈິຕອນເພື່ອຊ່ວຍອຳນວຍຄວາມສະດວກໃນການສືບສວນ ແລະ ດຳເນີນຄະດີຕໍ່ຜູ້ກະທຳຜິດ ແລະ ຕໍ່ເຄືອຂ່າຍອາຊະຍາກຳທີ່ຮັບຜິດຊອບການຂາຍ ແລະ ການຂູດຮີດທາງເພດເດັກ, ລວມທັງສື່ອອນລາຍ. | ກົມເຕັກໂນໂລຊີດິຈິຕອນ, ກົມຄວາມປອດໄພທາງໄຊເບີ |
| | | - ຝຶກອົບຮົມທັກສະຊີວິດແກ່ເດັກ ແລະ ໄວໜຸ່ມກ່ຽວກັບ ເຕັກໂນໂລຊີໃໝ່ ແລະ ສື່ສັງຄົມອອນລາຍ ລວມທັງການລໍ້ລຽນທາງສື່ສັງຄົມອອນລາຍໃນກຸ່ມນັກຮຽນ.<br>- ຝຶກອົບຮົມທັກສະຊີວິດແກ່ເດັກ ແລະ ໄວໜຸ່ມ ກ່ຽວກັບການນຳໃຊ້ເຕັກໂນໂລຢີໃໝ່ ແລະ ສື່ສັງຄົມອອນລາຍ, ລວມທັງການເຢາະເຢີ້ຍທາງສື່ສັງຄົມອອນລາຍໃນກຸ່ມນັກຮຽນ. | ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ, ກົມຄວາມປອດໄພໄຊເບີ,ກົມເຕັກໂນໂລຊີດິຈິຕອນ |
| | | - ຈັດຕັ້ງປະຕິບັດການສຶກສາອົບຮົມການເປັນພໍ່ແມ່ທີ່ດີທີ່ລວມເອົາຂໍ້ຄວາມການປົກປ້ອງທາງສື່ສັງຄົມອອນລາຍລວມທັງວິທີການກຳນົດເດັກທີ່ມີຄວາມສ່ຽງ, ວິທີການແນະນຳເດັກກ່ຽວກັບການນຳໃຊ້ອິນເຕີເນັດທີ່ປອດໄພ, ບ່ອນໃດທີ່ຈະຊອກຫາຄວາມຊ່ວຍເຫຼືອ ແລະ ວິທີການສະໜັບສະໜູນ ເມື່ອເດັກໄດ້ຮັບຄວາມສ່ຽງຈາກທາງສື່ສັງຄົມອອນລາຍ. | ຄກມດ ກະຊວງ: ຫ້ອງ ການ, ກົມ, ສູນ, ອົງ ການ, ສະຖາບັນ, ບັນ ດາບໍລິສັດ, ດ້ານໂທລະຄົມ, ໄປສະນີ |

**ມາດຕາ 02:** ມອບໃຫ້ ຄກມດ ບັນດາກົມ, ອົງການ, ສະຖາບັນ, ສູນ, ບໍລິສັດ ດ້ານໂທລະຄົມ, ໄປສະນີ ອ້ອມຂ້າງ ກຕສ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີພ້ອມທັງຜັນຂະຫຍາຍເປັນ ແຜນການ, ແຜນງານ, ໂຄງການ, ງົບປະມານ ແລະ ກິດຈະກຳອັນລະອຽດເຂົ້າໃນແຜນວຽກວິຊາສະເພາະພາກສ່ວນຕົນ ໃຫ້ສຳເລັດຕາມແຜນການທີ່ວາງໄວ້.

**ມາດຕາ 03:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງລັດຖະມົນຕີ

ປະທານ ຄກມດ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ສັນຕິສຸກ ສິມມາລາວົງ



สแกนด้วย CamScanner